ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ນະຄອນຫລວງວຽງຈັນ
ຫ້ອງການປົກຄອງ

ເລກທີ 02 /ຈນວ
ວັນທີ 09 ເມສາ 2015

# ຄໍາສັ່ງ

## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ສະກັດກັ້ນອັກຄີໄພ ໃນເຂດຊຸມຊົນທົ່ວນະຄອນວຽງຈັນ

ເຖິງ: - ບັນດາທ່ານເຈົ້າເມືອງ, ຫົວໜ້າພະແນກການ-ອົງການທຽບເທົ່າອ້ອມຂ້າງ ນະຄອນວຽງຈັນ;
- ບັນດາທ່ານຫົວໜ້າຫ້ອງການກະຊວງ-ອົງການທຽບເທົ່າອ້ອມຂ້າງສູນກາງທີ່ມີສໍານັກງານຢູ່ນະຄອນຫຼວງວຽງຈັນ.
- ບັນດາທ່ານຜູ້ອໍານວຍການລະຖາບັນ, ອົງການຈັດຕັ້ງທາງສັງຄົມ, ວິສາຫະກິດ, ຫ້າງຮ້ານ ພົນລະເມືອງລາວ ແລະ ຊາວຕ່າງປະເທດ ທົ່ວນະຄອນຫລວງວຽງຈັນ.

ສັງເກດເຫັນວ່າ, ປັດຈຸບັນນະຄອນຫລວງວຽງຈັນຂອງພວກເຮົາໄດ້ມີການພັດທະນາໃນທຸກດ້ານດ້ວຍຈັງຫວະໄວ ແລະ ຕໍ່ເນື່ອງ, ພື້ນຖານໂຄງລ່າງຂະຫຍາຍກ້ວາງອອກຢ່າງໄວວາ, ໂສມໜ້າຕົວເມືອງ ແລະ ຄຸນນະພາບຊີວິດຂອງປະຊາຊົນໄດ້ຮັບການຍົກລະດັບດີຂຶ້ນເປັນກ້າວໆ, ແຕ່ໄປພ້ອມກັບດ້ານຕັ້ງໜ້າກໍໄດ້ມີສິ່ງບໍ່ເພິ່ງປາດຖະໜາເກີດຂຶ້ນ ແລະ ກີດໜ່ວງຖ່ວງດຶງການພັດທະນາ ກໍຄືກໍ່ໃຫ້ເກີດມີຄວາມບໍ່ສະຫງົບສຸກໃນສັງຄົມ ເປັນຕົ້ນແມ່ນບັນຫາອັກຄີໄພໄດ້ເກີດຂຶ້ນຢ່າງຕໍ່ເນື່ອງ ແລະ ຍັງມີຄວາມສ່ຽງທີ່ອາດຈະເກີດ ຂຶ້ນໄດ້ທຸກເວລາ, ຊຶ່ງໃນປີ 2014 ຜ່ານມາ ແລະ ໃນ 4 ເດືອນຕົ້ນປີ 2015 ຜ່ານມາ ໄດ້ເກີດມີເຫດການໄຟໄໝ້ທັງຂະໜາດຕ່າງໆຫຼາຍສິບຄັ້ງ, ອັນໄດ້ສ້າງຄວາມເສຍຫາຍໃຫ້ແກ່ຊັບສິນສ່ວນບຸກຄົນ ແລະ ຂອງສ່ວນລວມເປັນຈໍານວນຫລວງຫລາຍ, ຊຶ່ງເຂດທີ່ມັກເກີດອັກຄີໄພຂຶ້ນ ແມ່ນເຂດຊຸມຊົນແອອັດ(ຊະລໍາ),. ເຂດເຮືອນເກົ່າແກ່-ຊຸດໂຊມ ແລະ ເຂດຕະຫຼາດທີ່ບໍ່ໄດ້ມາດຕະຖານ. ສາເຫດຕົ້ນຕໍແມ່ນເກີດມາຈາກຄວາມເລີ່ນເລີ້, ຂາດສະຕິໃນການໃຊ້ເຊື້ອໄຟ, ສາຍໄຟຟ້າເກົ່າແກ່ກາຍກໍານົດການໃຊ້ງານ ແລະ ຄວາມພ້ອມດັບມອດຍັງບໍ່ທັນດີ ແລະ ອື່ນໆ.

ເພື່ອປ້ອງກັນ, ຫຼີກເວັ້ນບໍ່ໃຫ້ເກີດອັກຄີໄພ ແລະ ຢັບຢັ້ງຕົນເສຍຫາຍໃນຂອບເຂດຕໍ່າທີ່ສຸດ ແລະ ປະກອບສ່ວນສໍາຄັນເຂົ້າໃນຈຸດໝາຍສ້າງນະຄອນວຽງຈັນກາຍເປັນເມືອງໜ້າຢູ່, ການພັດທະນາໄວ ແລະ ຍືນຍົງ ສົມກຽດເປັນເມືອງຫຼວງຂອງປະເທດ.

ເຈົ້າຄອງນະຄອນຫລວງວຽງຈັນ ອອກຄໍາສັ່ງ:

1. ໃຫ້ທຸກເມືອງ, ພະແນກການ-ອົງການທຽບເທົ່າອ້ອມຂ້າງນະຄອນຫຼວງວຽງຈັນ, ທຸກຫ້ອງການ ຂອງກະຊວງ-ອົງການທຽບເທົ່າຂັ້ນສູນກາງ, ທຸກສະຖາບັນ, ວິສາຫະກິດ, ບໍລິສັດ, ຫ້າງຮ້ານ, ຕະຫຼາດ, ສູນການຄ້າ ແລະ ທຸກບ້ານ ຕະຫຼອດເຖິງທຸກຄອບຄົວ ໃນທົ່ວນະຄອນຫລວງວຽງຈັນ ໃຫ້ເພີ່ມທະວີຄວາມຮັບຜິດຊອບໃນການປ້ອງກັນ ແລະ ແກ້ໄຂອັກຄີໄພໃຫ້ສູງກວ່າເກົ່າ ແລະ ໃຫ້ເປັນໄປຕາມກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ 09 /ສພຊ, ລົງວັນທີ 24 ທັນວາ 2007, **ໃນນັ້ນເປົ້າໝາຍທີ່ຈະຕ້ອງໄດ້ສຸມໃສ່ສະກັດກັ້ນກ່ອນໝູ່ຢູ່ນະຄອນວຽງຈັນແມ່ນ:** ເຂດຊຸມຊົນແອອັດ(ຊຸະລຳ), ເຂດເຮືອນເກົ່າແກ່ຊຸດໂຊມ; ເຂດຕະຫລາດ, ລະບົບສາງ ແລະ ເຂດປ່າໄມ້ແຫ້ງແລ້ງ ໂດຍໃຫ້ເຄື່ອນໄຫວຢ່າງຕໍ່ເນື່ອງ, ເປັນປົກກະຕິ ແລະ ຖືວຽກງານດັ່ງກ່າວເປັນຄວາມຮັບຜິດຊອບການເມືອງ ແລະ ພັນທະຂອງຕົນ.

2. **ສຳລັບແນວທາງສຳຄັນ ແລະ ວິທີການຕົ້ນຕໍໃນການປ້ອງກັນ ແລະ ແກ້ໄຂໃນແຕ່ລະເປົ້າໝາຍ** ໃຫ້ເອົາໃຈໃສ່ ດັ່ງນີ້ :

2.1. **ໃນເຂດທີ່ມີເຄຫະສະຖານຫຼາຍ ຫຼື ເປັນຊຸມຊົນແອອັດ(ຊຸະລຳ) ແລະ ເຂດມີເຮືອນເກົ່າແກ່ຊຸດໂຊມຫຼາຍ:** ໃຫ້ປະຕິບັດຕາມມາດຕາ 14 ຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ: 09 /ສພຊ , ລົງວັນທີ 24 ທັນວາ 2007 ຢ່າງຄົບຖ້ວນ ແລະ ເຂັ້ມງວດໂດຍມີກົນໄກ, ມີການຈັດຕັ້ງ ແລະ, ມີບຸກຄົນຮັບຜິດຊອບຢ່າງຈະແຈ້ງ, ໝາຍວ່າຕ້ອງດຳເນີນການດັ່ງນີ້:

ໜຶ່ງ: **ສຳລັບເຮືອນຢູ່ອາໄສໃຫ້ຕິດຕັ້ງລະບົບໄຟຟ້າຖືກຕາມຫຼັກການເຕັກນິກ**, ຖ້າຫາກເຫັນວ່າ ອຸປະກອນໄຟຟ້າ ໃຊ້ງານມາດົນແລ້ວ ຕ້ອງໄດ້ປ່ຽນຖ່າຍ ໃຫ້ໄດ້ມາດຖານ; ພ້ອມກັນນັ້ນ ກໍໃຫ້ກະກຽມ ພາຫະນະ, ອຸປະກອນ ແລະ ເງື່ອນໄຂຕ່າງໆ ເພື່ອກຽມພ້ອມສະກັດກັ້ນອັກຄີໄພ (ໃຫ້ມີປໍ້າດັບເພີງ, ມີແຫຼ່ງນ້ຳສຳຮອງ), ໃຫ້ຈັດເກັບບັນດາທາດໄວໄຟ, ລະເບີດງ່າຍ, ເຕົາໄຟ ແລະ ຮ້ານບູຊາ ໄວ້ໃນບ່ອນທີ່ປອດໄພ, ຫ່າງໄກຈາກແຫຼ່ງໄຟ ແລະ ແຫຼ່ງຄວາມຮ້ອນ.

ສອງ: **ສຳລັບບ້ານ** ແລະ ຄຸ້ມເຂດຊຸມຊົນຕ້ອງມີແຫຼ່ງນ້ຳເພື່ອມອດໄຟລວມຂອງບ້ານ ຫຼື ຂອງຄຸ້ມ, ໃຫ້ຈັດຕັ້ງໜ່ວຍອາສາສະໝັກປ້ອງກັນອັກຄີໄພຂອງຕົນຂຶ້ນປະມານ 10 ຄົນໂດຍໃຫ້ໝູນວຽນກັນປະຈຳການ ແລະ ໃຫ້ພະນັກງານເຫຼົ່ານັ້ນໄດ້ຮັບການຝຶກອົບຮົມຈາກເຈົ້າໜ້າທີ່ພະແນກຕຳຫຼວດປ້ອງກັນ ແລະ ສະກັດກັ້ນອັກຄີໄພ ນະຄອນຫຼວງ.

ສາມ: ບໍ່ໃຫ້ຈູດຂີ້ເຫຍື້ອຕາມເຮືອນ, ແຄມທາງ, ສວນຄົວຫຼັງເຮືອນ ຫຼື ວັດຖຸທີ່ເປັນທາດລະເບີດ, ທາດໄວໄຟ.

ຖ້າເກີດມີກໍລະນີດັ່ງກ່າວນີ້ຢູ່ໃສໃຫ້ຄົວເຮືອນທີ່ຢູ່ໃກ້ຄຽງ ແລະ ບ້ານນັ້ນຕ້ອງເປັນເຈົ້າການຮັບຜິດຊອບແກ້ໄຂໃຫ້ທັນການ

ສີ່ : ໃຫ້ທຸກພາກສ່ວນທີ່ອາໄສຢູ່ໃນອາຄານສູງ, ເຮືອນໃຫຍ່, ຄຸ້ມບ້ານໜຶ່ງ, ເຂດຊຸມຊົນ ຫຼື ທົວໜ່ວຍ 10 ຫຼັງຄາເຮືອນໃຫ້ຈັດຫາ ແລະ ກໍ່ສ້າງອ່າງເກັບນ້ຳໄວ້ ໃຕ້ດິນ 10,000 - 20,000 ແມັດກ້ອນ ໄວ້ຂອງຮັບອັກຄີໄພກັບທີ່ ແລະ ໃຫ້ຖືເປັນມາດຖານໃໝ່ໃນການປຸກສ້າງຕຶກອາຄານ, ສຳນັກງານຕ່າງໆໃນນະຄອນຫຼວງຕໍ່ໄປ

2.2. **ໃນເຂດຕະຫລາດ, ສູນການຄ້າ ແລະ ລະບົບສາງ** ໃຫ້ປະຕິບັດຕາມມາດຕາທີ 21 ຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ: 09 /ສພຊ , ລົງວັນທີ: ວັນທີ 24 ທັນວາ 2007

ໃນນັ້ນ ໃຫ້ເອົາໃຈໃສ່:

ໜຶ່ງ: ຕະຫລາດຊຸມຊົນ, ໃນສູນການຄ້າ ແລະ ສາງສິນຄ້າ ຕ້ອງມີລະບົບໄຟຟ້າ ແລະ ອຸປະກອນປ້ອງກັນອັກຄີໄພຄື ລະບົບໄຟຟ້າຮັບໃຊ້ການທຸລະກິດ, ຊີວິດປະຈຳວັນ ແລະ ມີລະບົບປ້ອງກັນອັກຄີໄພ;

ສອງ: ຮ້ານຂາຍເຄື່ອງ ຕ້ອງໃຫ້ຈັດສັນເປັນລະບົບ ແລະ ຈັດປະເພດເຄື່ອງທີ່ຮັບຄວາມຮ້ອນສູງໄວ້ໄກຈາກຫາດໄຟ

ສາມ: ຕ້ອງມີອ່າງເກັບນ້ຳ, ກ໊ອກນ້ຳມອດໄຟ ແລະ ອຸປະກອນມອດໄຟ(ບັ້ງດັບໄຟ)ປະຈຳໄວ້ແຕ່ລະຈຸດ, ແຕ່ລະຮ້ານ ພ້ອມທັງໃຫ້ມີໜ່ວຍງານເຝົ້າລະວັງ ແລະ ສະກັດກັ້ນອັກຄີໄພ ປະຈຳພື້ນຖານກິດຈະການຂອງຕົນ.

ສີ່ : ຕ້ອງແຕ່ງຕັ້ງບຸກຄະລາກອນຈຳນວນໜຶ່ງຮັບຜິດຊອບວຽກງານອັກຄີໄພ ແລະ ຕ້ອງໃຫ້ຮຽນຮູ້ວິຊາການຈຳເປັນເພື່ອແກ້ໄຂເຫດທີ່ອາດຈະເກີດຂຶ້ນ

2.3. **ສຳລັບເຂດປ່າໄມ້ແຫ້ງແລ້ງ ໃຫ້ປະຕິບັດຕາມມາດຕາທີ 24 ຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ** ສະບັບເລກທີ: 09 /ສພຊ , ລົງວັນທີ: ວັນທີ 24 ທັນວາ 2007 ຢ່າງເຂັ້ມງວດ ໃນນັ້ນ ໃຫ້ເອົາໃຈໃສ່:

ໜຶ່ງ: ການເຄື່ອນໄຫວໄປມາຕາມປ່າ ຫລື ແຄມປ່າ ຕ້ອງມີສະຕິລະວັງໃນການດັງໄຟ, ວາງຫາດໄຟ, ຖິ້ມເສດກອກຢາ, ກ່ອນສິ້ນສຸດກິດຈະການນຳໃຊ້ໄຟ ທຸກຊະນິດຕ້ອງດັບໄຟໃຫ້ມອດກ່ອນ

ສອງ: ການເຜົາຖ່ານ, ການເຮັດສວນຈູດໄມ້ ຕ້ອງມີສະຕິປ້ອງກັນໄຟໄໝ້ລາມ ແລະ ຕ້ອງມີກຳລັງຄົນ, ອຸປະກອນດັບມອດໄວ້ລ່ວງໜ້າ.

ສາມ: ເມື່ອມີກໍລະນີໄຟໄໝ້ລາມປ່າເກີດຂຶ້ນຢູ່ໃກ້ກັບ ຄົວເຮືອນ ແລະ ບ້ານໃດ, ບ່ອນນັ້ນຕ້ອງເປັນເຈົ້າການມອດໄຟກ່ອນໃຫ້ທັນການ ແລະ ຊອກຫາຜູ້ກະທຳຜິດເພື່ອມາລົງໂທດຕາມກົດໝາຍ

3. **ສຳລັບມາດຕະການຈັດຕັ້ງປະຕິບັດຄຳສັ່ງມີ ດັ່ງນີ້:**

ໜຶ່ງ: ໃຫ້ທຸກເມືອງ ຮີບຮ້ອນດຳເນີນການສຳຫຼວດ, ກວດກາເບິ່ງຈຸດທີ່ມີຄວາມສ່ຽງທີ່ອາດຈະກໍ່ໃຫ້ເກີດອັກຄີໄພເປັນຕົ້ນ: ກວດກາເບິ່ງນຳການຕິດຕັ້ງລະບົບໄຟຟ້າ, ມາດຖານການໃຊ້ງານຂອງອຸປະກອນໄຟຟ້າຕ່າງໆຢູ່ໃນອາຄານ, ເຮືອນທີ່ເກົ່າແກ່ຊຸດໂຊມ, ເຂດຊຸມຊົນແອອັດ (ຫຼືຊະລຳ), ຕະຫຼາດຊຸມຊົນ. ພາຍຫຼັງສຳຫຼວດໄດ້ຂໍ້ມູນລະອຽດແລ້ວໃຫ້ປະຊາສຳພັນໃຫ້ແກ່ສັງຄົມຮັບຊາບຢ່າງທົ່ວເຖິງ ແລະ ໃຫ້ເຜີຍແຜ່, ແນະນຳຄວາມຮູ້ຂັ້ນພື້ນຖານກ່ຽວກັບວິທີການປ້ອງກັນ ແລະ ແກ້ໄຂອັກຄີໄພໃຫ້ແກ່ຊຸມຊົນຮັບຊາບ ແລະ ຮ່ວມມືປະຕິບັດ.

ສອງ: ໃຫ້ທຸກເມືອງກຳນົດທີ່ຕັ້ງຂອງສາຂາກອງດັບເພີງຂອງພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ ເມືອງໜຶ່ງບໍ່ຫຼຸດ 1-2 ແຫ່ງ ;ໃຫ້ຈັດຝຶກອົບຮົມກ່ຽວກັບວິທີການນຳໃຊ້ພະຫະນະ, ອຸປະກອນເຄື່ອງມືຮັບໃຊ້ວິຊາສະເພາະ ແລະ ຂະຫຍາຍສາຂາ ໃຫ້ສຳເລັດໄວ ເປັນຕົ້ນຢູ່ 4 ເມືອງໃນເທດສະບານເປັນບ່ອນທົດລອງກ່ອນ;

ສາມ: ໃຫ້ລົງກວດກາ, ສ້ອມແປງ ແລະ ຂະຫຍາຍກ໊ອກນ້ຳມອດໄຟໃນເສັ້ນທາງຕ່າງໆ ໃນເຂດຕົວເມືອງໂດຍສະເພາະຕາມເຂດຊຸມຊົນແອອັດ ແລະ ຈຸດຕ່າງໆ ທີ່ມີມາແລ້ວໃຫ້ສາມາດນຳໃຊ້ໄດ້ປົກກະຕິ.

ສີ່: ມອບໃຫ້:

+ ທ່ານຫົວໜ້າພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພນະຄອນວຽງຈັນ ເປັນເຈົ້າການຈັດຕັ້ງປະຕິບັດກົດໝາຍ ແລະ ຄຳສັ່ງສະບັບນີ້ໂດຍມີທ່ານຫົວໜ້າກອງບັນຊາການ ປກສ ນະຄອນຫຼວງເປັນຜູ້ບັນຊາໂດຍກົງ, ມີພະແນກ ຍທຂ, ອພບ, ລັດວິສາຫະກິດໄຟຟ້າ, ລັດວິສາຫະກິດນ້ຳປະປາ, ພະແນກແຮງງານສະຫວັດດີການ ແລະ ສັງຄົມ, ຫ້ອງການການເງິນ ແລະ ອົງການປົກຄອງເມືອງ ແລະ ບ້ານກ່ຽວຂ້ອງເປັນໜ່ວຍງານຈັດຕັ້ງປະຕິບັດ

+ ໃຫ້ທ່ານເຈົ້າເມືອງ, ນາຍບ້ານ ເປັນເຈົ້າການບັນຊາການຈັດຕັ້ງປະຕິບັດໃນຂອບເຂດຂອງຕົນ; ທ່ານຫົວໜ້າພະແນກການ-ອົງການທຸງບເທົ່າອ້ອມຂ້າງນະຄອນວຽງຈັນ,ບັນດາທ່ານຫົວໜ້າຫ້ອງການກະຊວງ-ອົງການຂອງສູນກາງພັກ-ລັດຖະບານ, ຜູ້ອຳນວຍການວິສາຫະກິດ, ຜູ້ຄຸ້ມຄອງ-ສຳປະທານບັນດາຕະຫຼາດ ແລະ ສູນການຄ້າ ທົ່ວນະຄອນວຽງຈັນ ເປັນຜູ້ນຳພາການຈັດຕັ້ງປະຕິບັດການປ້ອງກັນ ແລະ ສະກັດກັ້ນອັກຄີໄພໃນຂອບເຂດຂອງຕົນ

+ ໃຫ້ຄະນະໂຄສະນາອົບຮົມ, ພະແນກຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບພະແນກຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພນະຄອນຫລວງຈັດພິມປຶ້ມຄູ່ມືເພື່ອເຜີຍແຜ່, ແນະນຳ, ປະຊາສຳພັນຄຳສັ່ງສະບັບນີ້ ແລະ ປຸກລະດົມປະຊາຊົນຊາວນະຄອນວຽງຈັນໃຫ້ເຂົ້າຮ່ວມການປ້ອງກັນ ແລະ ສະກັດກັ້ນອັກຄີໄພຕາມຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ;

4. ທ່ານຫົວໜ້າພະແນກການ-ອົງການທຽບເທົ່າອ້ອມຂ້າງນະຄອນວຽງຈັນ, ຫ້ອງການກະຊວງ-ອົງການຂອງສູນກາງພັກ-ລັດຖະບານ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ທ່ານເຈົ້າເມືອງ, ນາຍບ້ານ, ຜູ້ອຳນວຍການວິສາຫະກິດ, ຜູ້ປະກອບການຕະຫຼາດ, ຫົວໜ່ວຍທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ຊາວນະຄອນວຽງຈັນຈົ່ງຮັບຮູ້ ແລະ ໃຫ້ຖືເອົາວຽກງານດັ່ງກ່າວເປັນໜ້າທີ່ ແລະ ພັນທະຂອງຕົນທີ່ຕ້ອງໄດ້ຮ່ວມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

5. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຫ້ກວດກາປະເມີນຜົນທຸກໆ 3 ເດືອນ ຢ່າງເປັນປົກກະຕິ.

ເຈົ້າຄອງນະຄອນຫລວງວຽງຈັນ

ດຣ. ສິນລະວົງ ຄຸດໄພທູນ